6. ທ່ານ ສົມປະສົງ ສີໄຊ	ຜູ້ອຳນວຍການຝ່າຍການເງິນ ແລະ ບັນຊີ
7. ທ່ານ ພົງຖານ ພິດຈຳນົງ	ຜູ້ອຳນວຍການຝ່າຍປະຕິບັດການ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ພ້ອມດ້ວຍເຈົ້າໜ້າທີ່ທ່ານຜູ້ຕາງໜ້າຈາກຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບ ລາວ, ຜູ້ຕາງໜ້າຈາກຜູ້ກວດສອບບັນຊີພາຍນອກ, ຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງ ຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ ກໍໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

❖ **ການລົງຄະແນນສຽງ:**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນ ແລະ ຜູ້ຕ່າງ ໜ້າທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ.
- ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ ໃຫ້ທ່ານໝາຍເຄື່ອງໝາຍຄູນ (x) ແລະ ຂຽນຊື່, ນາມສະກຸນ **ຈຳນວນຮຸ້ນ ລອທ ທີ່ທ່ານຖືຢູ່** ລົງໃນບັດລົງຄະແນນໃນວາລະນັ້ນໆ ທີ່ມີເຄື່ອງໝາຍບາໂຄ້ດ ປະຈຳຕົວຜູ້ຖືຮຸ້ນແຕ່ລະທ່ານ ເຊິ່ງເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
- ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມ ຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງ ຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນ ເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າ ບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.
- **ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ລອທ ທັງໝົດໃນທີ່ປະຊຸມ.**
- ກ່ອນການລົງຄະແນນສຽງແຕ່ລະວາລະ ແມ່ນຈະເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນ ທ່ານໃດມີຄຳຖາມສາມາດຖາມໄດ້.

❖ **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງ ປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕາມທີ່ບໍລິສັດ ໄດ້ບັນທຶກໄວ້ລ່ວງ

ໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ.
- ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາທີ່ໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ເວລາຕໍ່ມາ ປະທານກໍ່ໄດ້ກ່າວເລີ່ມເຂົ້າສູ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໂດຍລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1 ພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

ທ່ານ ສົມປະສົງ ສີໄຊ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ໂດຍຫຍໍ້ດັ່ງນີ້:

ບໍລິສັດມີລາຍໄດ້ໃນປີ 2017 ເທົ່າກັບ 55,381 ລ້ານກີບຊຶ່ງໃນນີ້ມີລາຍໄດ້ຈາກການບໍລິການສອນ ແລະ ຕົ້ນກ້າປາມຈຳນວນ 5,658.67 ລ້ານກີບ, ລາຍໄດ້ຈາກການຜະລິດສິນຄ້າຈຳໜ່າຍຈຳນວນ 36,779.78 ລ້ານກີບ ແລະ ລາຍໄດ້ຈຳໜ່າຍສິນຄ້າສຳເລັດຮູບຈຳນວນ 12,942.00 ລ້ານກີບ ໃນປີ 2018 ບໍລິສັດມີລາຍໄດ້ລວມ 45,523.00 ລ້ານກີບຊຶ່ງໃນນີ້ມີລາຍໄດ້ຈາກການການບໍລິການສອນ ແລະ ຕົ້ນກ້າປາມຈຳນວນ 1,895.76 ລ້ານກີບ ຊຶ່ງຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 66.55%, ລາຍໄດ້ຈາກການຜະລິດສິນຄ້າຈຳໜ່າຍຈຳນວນ 39,291.50 ລ້ານກີບ ເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 6.83% ແລະ ລາຍໄດ້ຈຳໜ່າຍສິນຄ້າສຳເລັດຮູບ 4,336.02 ລ້ານກີບຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 66.50% ສະຫຼຸບລວມລາຍໄດ້ປີ 2018 ຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 17.80%.

ບໍລິສັດມີກຳໄລໃນປີ 2017 ເທົ່າກັບ 4,039.87 ຄິດເປັນອັດຕາເທົ່າກັບ 7.29% ເມື່ອທຽບກັບລາຍໄດ້ລວມແລະໃນປີ 2018 ບໍລິສັດມີກຳໄລເທົ່າກັບ 613.97 ລ້ານກີບຄິດເປັນອັດຕາເທົ່າກັບ 1.32% ເມື່ອທຽບກັບລາຍໄດ້ລວມບໍລິສັດມີກຳໄລຫຼຸດລົງເນື່ອງຈາກຍອດ ການຈຳໜ່າຍສິນຄ້າຫຼຸດລົງ.

ວັນທີ 31 ທັນວາ 2017 ບໍລິສັດມີສິນຊັບລວມເທົ່າກັບ 58,451.52 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີສິນຊັບລວມ ເທົ່າກັບ 69,754.35 ລ້ານກີບຊຶ່ງເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 19.34% ເມື່ອທຽບກັບສິນຊັບລວມ ບໍລິສັດມີການລົງທຶນໃນ ທີ່ດິນ, ອາຄານໂຮງງານ, ທັງໃນເຂດພື້ນທີ່ ສວນເມືອງນາຊາຍທອງ, ສວນສາລະວັນ ແລະ ສວນແອ໊ດຊ້າງ.

ວັນທີ 31 ທັນວາ 2017 ບໍລິສັດມີຫນີ້ສິນລວມເທົ່າກັບ 12,593.24 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີຫນີ້ສິນລວມເທົ່າກັບ 10,012.63 ລ້ານກີບຊຶ່ງລົດລົງຈາກປີ 2017 ໃນອັດຕາເທົ່າກັບ 20.49% ເມື່ອທຽບກັບຫນີ້ສິນລວມຊຶ່ງຫນີ້ສ່ວນໃຫຍ່ຂອງ ບໍລິສັດເປັນເຈົ້າຫນີ້ການຄ້າ.

ວັນທີ 31 ທັນວາ 2017 ບໍລິສັດມີສ່ວນຂອງຜູ້ຖືຮຸ້ນລວມ ເທົ່າກັບ 45,585.28 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີສ່ວນຂອງຜູ້ຖືຮຸ້ນລວມ ເທົ່າກັບ 59,471.72 ລ້ານກີບ ຊຶ່ງເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 31.04% ເມື່ອທຽບກັບສ່ວນຂອງຜູ້ຖືຮຸ້ນລວມ ທັງນີ້ເນື່ອງຈາກບໍລິສັດມີການຈຳຫນ່າຍຮຸ້ນເພີ່ມທຶນເມື່ອວັນທີ 17 ສິງຫາ 2018 ຈຳນວນ 20,000,000 ຮຸ້ນ.

ວັນທີ 31 ທັນວາ 2017 ບໍລິສັດມີກະແສເງິນສົດໃນມືເທົ່າກັບ 3,572.46 ລ້ານກີບໃນນີ້ມີກະແສເງິນສົດເຂົ້າຈາກການດຳເນີນງານ ເທົ່າກັບ 5,811.17 ລ້ານກີບ ມີກະແສເງິນສົດອອກຈາການກິດຈະກຳການລົງທຶນ ເທົ່າກັບ (3,621.72 ລ້ານກີບ) ແລະ ວັນທີ 31 ທັນວາ 2018 ບໍລິສັດມີເງິນສົດໃນມືເທົ່າກັບ 4,823.43 ລ້ານກີບໃນນີ້ມີກະແສເງິນສົດອອກຈາກການດຳເນີນງານ ເທົ່າກັບ (6,524.50 ລ້ານກີບ) ມີກະແສເງິນສົດອອກຈາກກິດຈະກຳການລົງທຶນ ເທົ່າກັບ (5,951.75 ລ້ານກີບ) ແລະມີກະແສເງິນສົດເຂົ້າຈາກການກິດຈະກຳການເງິນ ເທົ່າກັບ 13,696.14 ລ້ານກີບ.

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

- ເຫັນດີຈຳນວນ 77,495,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2 ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ປະຈຳປີ 2018.

ທ່ານ ສົມປະສົງ ສີໄຊ ສະເໜີບົດລາຍງານການເງິນ ປະຈຳປີ 2018 ແມ່ນເປັນໄປຕາມວາລະທີ 1 ແລະ ເອກະສານການເງິນທີ່ແນບໃນວາລະທີ 2 ຈຶ່ງຂໍໃຫ້ຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ປະຈຳປີ 2018.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ປະຈຳປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງ ຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງບົດລາຍງານການເງິນ ປະຈຳປີ 2018.

- ເຫັນດີຈຳນວນ 77,495,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 3 ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019.

ປະທານສະພາບໍລິຫານໄດ້ສະເໜີແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ຕໍ່ກອງປະຊຸມ ໂດຍລາຍລະອຽດຫຼັກແມ່ນເປັນໄປຕາມ ທ່ານ ອຸດົມ ແກ້ວທະວົງ ຜູ້ອຳນວຍການໃຫຍ່ຈະໄດ້ອະທິບາຍດັ່ງນີ້:

1. ການຜະລິດ ແລະ ຈຳໜ່າຍ.

ໃນປີ 2019 ບໍລິສັດມີແຜນການຜະລິດ ແລະ ຈຳໜ່າຍຜະລິດພັນດັ່ງຕໍ່ໄປນີ້:

1.	ນ້ຳມັນກະຊວນ B5	92,256 ລ້ານກີບ
2.	ນ້ຳມັນ CPO	2,619 ລ້ານກີບ
3.	ນ້ຳມັນ Cooking Oil	4,050 ລ້ານກີບ
4.	ຕົ້ນກ້າ	3,213 ລ້ານກີບ
5.	ນ້ຳມັນ B100	1,350 ລ້ານກີບ
6.	ປຸ໋ຍ	1,275 ລ້ານກີບ
7.	ແປ້ງນິ້ວ	2,380 ລ້ານກີບ
8.	ແນວພັນສາລີ	2,106 ລ້ານກີບ

2. ແຜນພັດທະນາທຸລະກິດ.

- ແຜນໃນການສົ່ງເສີມການນຳໃຊ້ນ້ຳມັນກາຊວນຊີວະພາບ ທາງບໍລິສັດໄດ້ເນັ້ນຈຳໜ່າຍໃຫ້ຜູ້ບໍລິໂພກໂດຍກົງ ເຈາະກຸ່ມລູກຄ້າທີ່ນຳໃຊ້ນ້ຳມັນກາຊວນ ເຊັ່ນ: ໂຄງການຕ່າງໆທີ່ປັດຈຸບັນມີເພີ່ມຂຶ້ນຈຳນວນຫຼາຍ, ບໍລິສັດຂົນສົ່ງຄົມມະນາຄົມ, ບໍລິສັດຂົນສົ່ງສິນຄ້າຕ່າງໆ ແລະອື່ນໆ ໂດຍການຕິດຕັ້ງຖັງນ້ຳມັນພ້ອມຫົວຈ່າຍໃຫ້ແກ່ລູກຄ້າ.
- ຜະລິດຕະພັນສຳເລັດຮູບບໍລິສັດກໍ່ໄດ້ເອົາໃຈໃສ່ໃນການຂະຫຍາຍຖານລູກຄ້າໃຫ້ໄດ້ຫຼາຍຂຶ້ນໃນທົ່ວປະເທດ.
- ບໍລິສັດມີແຜນຈະຂະຫຍາຍການຜະລິດນ້ຳມັນກາຊວນຊີວະພາບ 200,000 ລິດຕໍ່ວັນ ເພື່ອຕອບສະໜອງຍຸດທະສາດການພັດທະນາພະລັງງານທົດແທນຂອງລັດຖະບານ ໃນການນຳໃຊ້ພະລັງງານປະເພດນ້ຳມັນກາຊວນຊີວະພາບໃຫ້ໄດ້ 10% ພາຍໃນປີ 2025 ຊຶ່ງຈະໄດ້ມີການດຳເນີນການເຮັດບົດວິພາກເພື່ອສະເໜີລັດຖະບານໃນການປະກາດໃຊ້ປະເພດນ້ຳມັນກາຊວນຊີວະພາບໃຫ້ໄດ້ທົ່ວປະເທດ.
- ຜັກດັນໃຫ້ລັດຖະບານອອກມາດຕະຖານ ແລະ ໂຄງສ້າງລາຄານ້ຳມັນກາຊວນຊີວະພາບໃນການຈຳໜ່າຍໃນປ້ຳນ້ຳມັນທົ່ວໄປ.
- ບໍລິສັດມີແຜນເນັ້ນການສົ່ງເສີມການປູກປາມຮ່ວມກັບປະຊາຊົນໃນຮູບແບບ 2+3 ແລະ ກຸ່ມກະສິກຳໃຫ້ໄດ້ຫຼາຍທີ່ສຸດ.
- ສຳຫຼັບທີ່ດິນໃນແຂວງສາລະວັນ ຈຳນວນ 5,200 ເຮັກຕາ, ເນື່ອງຈາກວ່າຈຸດປະສົງໃນການສຳປະທານເພື່ອປູກຕົ້ນປາມນັ້ນທາງລັດຖະບານໄດ້ທົບທວນການລົງທຶນຄືນໃຫມ່ ເນື່ອງຈາກເປັນພື້ນທີ່ທີ່ມີເນື້ອທີ່ໃນການສຳປະທານເປັນຈຳນວນຫຼາຍ, ທາງບໍລິສັດຈຶ່ງໄດ້ມີແນວຄິດປ່ຽນຮູບແບບແຜນໃນການສຳປະທານ ເພື່ອປູກພືດອຸດສາຫະກຳ ໂດຍສະເພາະແມ່ນຕົ້ນໄມ້ໃຫຍ່ໄວ ເນື່ອງຈາກເຫັນວ່າລົງທຶນຕ່ຳ ແລະ ຄືນຜົນຕອບຮັບໄດ້ໄວກວ່າ.
- ບໍລິສັດມີແຜນຜະລິດ ແລະ ຈຳໜ່າຍປຸ໋ຍຊີວະພາບ ຈາກກາກປາມ ແລະ ແຊງປາມ ທີ່ເກີດຈາກການຜະລິດນ້ຳມັນປາມດິບ.

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍ່ບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019.

- ເຫັນດີຈຳນວນ 77,495,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4 ພິຈາລະນາ ແລະ ຮັບຮອງໃຫ້ ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2018.

ປະທານໄດ້ລາຍງານຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ທີ່ຜ່ານມາ ເຫັນວ່າບໍລິສັດມີກຳໄລສຸດທິຈາກການດຳເນີນທຸລະກິດ ຫຼັງຈາກຫັກພາສີແລ້ວເທົ່າກັບ 613 ລ້ານກີບ ເມື່ອຫັກສຳຮອງຕາມ ກົດໝາຍແລ້ວຍັງເຫຼືອ 552 ລ້ານກີບ ທາງສະພາບໍລິຫານຈຶ່ງລົງມະຕິໃຫ້ນຳມາເປັນທຶນໝຸນວຽນເພື່ອດຳເນີນທຸລະກິດໃນປີ 2019 ໂດຍບໍ່ຈ່າຍເງິນປັນຜົນປະຈຳປີ 2018.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງໃຫ້ ບໍ່ມີການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງໃຫ້ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດປະຈຳປີ 2018

- ເຫັນດີຈຳນວນ 77,495,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5 ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2019.

ປະທານໄດແຈ້ງໃຫ້ກອງປະຊຸມຮັບຊາບວ່າ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ແລະ ແຈ້ງການຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີຜູ້ກວດສອບບັນຊີພາຍນອກ ໂດຍຕ້ອງເປັນຜູ້ກວດສອບທີ່ໄດ້ຮັບການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງຜ່ານການເຫັນດີຂອງກອງປະຊຸມສະພາບໍລິຫານ, ຈຶ່ງສະເໜີ ບໍລິສັດ **ພຣາຍສວໍເຕີເຮົ້າສກຸບເປີສ(ລາວ)** ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສະເພາະປະຈຳປີ 2019 ໂດຍມີຄ່າບໍລິການ

ເປັນເງິນຈຳນວນບໍ່ເກີນ 41,000 ໂດລາສະຫະລັດ. ເນື່ອງຈາກ, ບໍລິສັດ **ພຣາຍສວໍເຕີເຮົ້າສກຸບເປີສ (ລາວ)** ຈຳກັດ ຜູ້ດຽວ ແມ່ນເປັນຜູ້ກວດສອບບັນຊີໃຫ້ກັບບໍລິສັດມາແຕ່ການປະກາດຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າບໍລິການນັ້ນກໍ່ເປັນຈຳນວນທີ່ເໝາະສົມກັບວຽກງານໃນການກວດກາບັນຊີຂອງບໍລິສັດ ເຊິ່ງມີຈຳນວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້ ຈຶ່ງມີຄວາມຈຳເປັນຕ້ອງນຳໃຊ້ບຸກຄະລາກອນທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍເປັນບຸກຄະລາກອນຈາກຕ່າງປະເທດ.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍ່ບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2019, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2019

- ເຫັນດີຈຳນວນ 77,495,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານ.

ປະທານສະພາບໍລະຫານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບ ເນື່ອງຈາກສະພາບໍລະຫານຂອງບໍລິສັດຈຳນວນ 5 ທ່ານໄດ້ປະຕິບັດໜ້າທີ່ຄົບວາລະແລ້ວ ໄດ້ແກ່:

1. ທ່ານ ອະພິສິດ ຮຸຈິກຽດກຳຈອນ	ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
2. ທ່ານ ນາງ ຄຳແພງ ພັດທະດາວົງ	ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
3. ທ່ານ ເສດ ພັດທະນະມາດ	ສະມາຊິກສະພາບໍລິຫານ
4. ທ່ານ ອຸດົມ ແກ້ວທະວົງ	ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
5. ທ່ານ ນາງ ດວງສະໄໝ ເລົ່າຟົງ	ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)

ເຊິ່ງໃນປະຈຸບັນສະມາຊິກສະພາບໍລິຫານທຸກທ່ານໄດ້ປະຕິບັດໜ້າທີ່ຕ່າງໆຂອງບໍລິສັດຄົບວາລະຕາມກົດໝາຍວ່າ ດ້ວຍວິສາຫະກິດຄື 2 ປີ ຈຳເປັນຕ້ອງໄດ້ມີການເລືອກຕັ້ງສະມາຊິກສະພາບໍລິຫານໃໝ່ ເພື່ອປະຕິບັດໜ້າທີ່ໃນນາມ ຂອງບໍລິສັດຕໍ່ໄປ ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

6.1 ພິຈາລະນາການແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງບໍລິສັດ.

ເນື່ອງຈາກ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາ ດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ອະພິສິດ ຣຸຈິກຽດກຳຈອນ ອອກຈາກກອງປະຊຸມກ່ອນຊົ່ວຄາວ ແລະ ຜູ້ອຳນວຍການໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ລາຍລະອຽດຕາມເອກະສານ ປະກອບການພິຈາລະນາວາລະທີ 6.

ຫຼັງຈາກຜູ້ອຳນວຍການໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ອະພິສິດ ຣຸຈິກຽດກຳຈອນແລ້ວ ໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດ ສະແດງຄຳເຫັນໃນວາລະນີ້.

ຜູ້ອຳນວຍການຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນ ປະທານສະພາບໍລິຫານ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນປະທານ ສະພາບໍລິຫານ

- ເຫັນດີຈຳນວນ 77,110,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງ ປະຊຸມ

6.2 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ຄຳແພງ ພັດທະດາວົງ ເປັນຮອງປະທານສະພາບໍລິຫານ ແລະ ສະມາຊິກ ອິດສະຫຼະຂອງບໍລິສັດ.

ປະທານໄດ້ເຊີນໃຫ້ ທ່ານ ນາງ ຄຳແພງ ພັດທະດາວົງ ອອກຈາກກອງປະຊຸມຊົ່ວຄາວ ແລະ ໄດ້ອ່ານປະຫວັດ ໂດຍຫຍໍ້ຂອງ ທ່ານ ນາງ ຄຳແພງ ພັດທະດາວົງ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ຄຳແພງ ພັດທະດາວົງແລ້ວ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນ ວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ນາງ ຄຳແພງ ພັດທະດາວົງ ເປັນຮອງ ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ນາງ ຄຳແພງ ພັດທະດາວົງ ເປັນຮອງ ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ

- ເຫັນດີຈຳນວນ 77.495.496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງ ປະຊຸມ

6.3 ພິຈາລະນາການແຕ່ງຕັ້ງ ທ່ານ ເສດ ພັດທະນະມາດ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ເນື່ອງຈາກ ທ່ານ ເສດ ພັດທະນະມາດ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ເສດ ພັດທະນະມາດ ອອກຈາກກອງປະຊຸມກ່ອນຊົ່ວຄາວ ແລະ ປະທານໄດ້ອ່ານປະຫວັດໂດຍຫຍໍ້ ຂອງ ທ່ານ ເສດ ພັດທະນະມາດ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ເສດ ພັດທະນະມາດ ແລ້ວ ໄດ້ເປີດໂອກາດເຊີນຜູ້ຖື ຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນ ວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ເສດ ພັດທະນະມາດ ເປັນສະມາຊິກສະພາ ບໍລິຫານ ຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ແຕ່ງຕັ້ງ ທ່ານ ເສດ ພັດທະນະມາດ ເປັນສະມາຊິກ ສະພາບໍລິຫານ ຂອງບໍລິສັດ

- ເຫັນດີຈຳນວນ 69,485,501.00 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມ ກອງປະຊຸມ

6.4 ພິຈາລະນາການແຕ່ງຕັ້ງ ທ່ານ ອຸດົມ ແກ້ວທະວົງ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ເນື່ອງຈາກ ທ່ານ ອຸດົມ ແກ້ວທະວົງເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ອຸດົມ ແກ້ວທະວົງອອກຈາກກອງປະຊຸມກ່ອນຊົ່ວຄາວ ແລະ ປະທານໄດ້ອ່ານປະຫວັດໂດຍຫຍໍ້ ຂອງ ທ່ານ ອຸດົມ ແກ້ວທະວົງ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ອຸດົມ ແກ້ວທະວົງ ແລ້ວ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ ປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ອຸດົມ ແກ້ວທະວົງ ເປັນສະມາຊິກສະພາ ບໍລິຫານ ຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາແຕ່ງຕັ້ງ ທ່ານ ອຸດົມ ແກ້ວທະວົງ ເປັນສະມາຊິກສະພາ ບໍລິຫານຂອງບໍລິສັດ

- ເຫັນດີຈຳນວນ 73,195,496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງ ປະຊຸມ.

6.5 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ດວງສະໄໝ ເລົ່າຝຸງ ເປັນສະມາຊິກສະພາບໍລິຫານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ

ປະທານໄດ້ເຊີນໃຫ້ ທ່ານ ນາງ ດວງສະໄໝ ເລົ່າຝຸງ ອອກຈາກກອງປະຊຸມກ່ອນຊົ່ວຄາວ ແລະ ໄດ້ອ່ານ ປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ດວງສະໄໝ ເລົ່າຝຸງ ລາຍລະອຽດຕາມເອກະສານປະກອບການພິຈາລະນາ ວາລະ ທີ 6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ດວງສະໄໝ ເລົ່າຝຸງ ແລ້ວ ໄດ້ເປີດໂອກາດເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນ ວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ນາງ ດວງສະໄໝ ເລົ່າຝຸງ ສະມາຊິກສະພາ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ແຕ່ງຕັ້ງ ທ່ານ ນາງ ດວງສະໄໝ ເລົ່າຝົງ ເປັນ ສະມາຊິກສະພາບໍລິຫານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ .

- ເຫັນດີຈຳນວນ 77.495.496 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງ ປະຊຸມ

ຖືວ່າໄດ້ພິຈາລະນາຄົບວາລະການປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມສຳຫຼັບຜູ້ທີ່ຢາກປະກອບຄຳ ຄິດຄຳເຫັນຕື່ມ ແລະ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ປະທານໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນ ແລະ ແຂກຜູ້ທີ່ມີກຽດທຸກໆທ່ານ ຂໍອວຍພອນໄຊໃຫ້ບັນດາ ທ່ານ ຈົ່ງມີສຸຂະພາບແຂງແຮງ ປະສົບຜົນສຳເລັດໃນຫນ້າທີ່ການງານ ແລະ ຈົ່ງມີສຸຂະພາບແຂງແຮງ.

ດັ່ງນັ້ນ ປະທານກ່າວປິດກອງປະຊຸມເວລາ 10:30 ໂມງ, ຈຶ່ງຮຽນມາເພື່ອຊາບ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກຳຈອນ
ປະທານກອງປະຊຸມ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສະຖານະການເງິນ
ສິ້ນສຸດ ວັນທີ 31 ທັນວາ 2019

	ບິດ ອະທິບາຍ	ກວດສອບ 31 ທັນວາ 2019 ກີບ	ກວດສອບ 31 ທັນວາ 2018 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	1.642.354.110	4.823.430.665
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	12.316.222.480	16.577.627.158
ເຄື່ອງໃນສາງ, ສຸດທິ	5	2.773.520.035	865.481.946
ວັດສະດຸສະໜອງ, ສຸດທິ	6	1.716.636.754	906.316.624
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ	7	1.597.124.878	1.999.044.052
ຊັບສິນໝຸນວຽນອື່ນໆ		1.326.599.500	1.794.965.888
ລວມຊັບສິນໝຸນວຽນ		**21.372.457.757**	**26.966.866.333**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຖິທີ ມິຕິຕົນ, ສຸດທິ	8	23.037.515.848	20.280.020.977
ຄ່າເຍື່ອນລຳຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	9	23.056.340.152	22.507.458.490
ລວມຊັບສິນບໍ່ໝຸນວຽນ		**46.093.856.000**	**42.787.479.467**
ລວມຊັບສິນ		**67.466.313.757**	**69.754.345.800**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	10	1.632.656.751	9.218.844.391
ເງິນກູ້ຢືມໄລຍະສັ້ນ	12	375.150.103	426.674.639
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	13	3.498.266.000	-
ໜີ້ສິນໝຸນວຽນອື່ນໆ	11	691.693.443	367.107.838
ລວມໜີ້ສິນໝຸນວຽນ		**6.197.766.297**	**10.012.626.868**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງຈາກການເຊົ່າຊື້	13	1.330.129.132	-
ລວມໜີ້ສິນບໍ່ໝຸນວຽນ		**1.330.129.132**	**-**
ລວມໜີ້ສິນ		7.527.895.429	10.012.626.868
ທຶນເຈົ້າຂອງ			
ທຶນຈົດທະບຽນ	14	50.000.000.000	50.000.000.000
ສ່ວນເພີ່ມທຶນ	14	3.269.466.406	3.269.466.406
ກຳໄລສະສົມ			5.584.756.113
ຄັງສະສົມຕາມລະບຽບການ	15	907.166.353	887.496.413
ກຳໄລສະສົມລຳຖ້າແບ່ງປັນ		5.761.785.569	-
ລວມທຶນເຈົ້າຂອງ		**59.938.418.328**	**59.741.718.932**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**67.466.313.757**	**69.754.345.800**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 31 ມີນາ 2020

ທ່ານ ວັນສະໜຸມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 31 ມີນາ 2020

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 – 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019

	ບິດ ອະທິບາຍ	2019 ກີບ	2018 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ	16	124.340.962.484	45.523.277.934
ຕົ້ນທຶນໃນການຂາຍ		(113.465.238.169)	(38.510.797.543)
ກຳໄລຂັ້ນຕົ້ນ		**10.875.724.315**	**7.012.480.391**
ລາຍຈ່າຍການຂາຍ ແລະ ບໍລິຫານ		(7.983.813.672)	(5.836.303.968)
ລາຍຮັບອື່ນໆ		801.612.958	76.292.749
ຂາດທຶນຈາກອັດຕາແລກປ່ຽນ		(3.168.699.096)	(445.532.695)
ກຳໄລ/(ຂາດທຶນ)ຈາກການດຳເນີນງານ		**524.824.505**	**806.936.477**
ລາຍຈ່າຍທາງການເງິນ		(192.504.846)	-
ກຳໄລ/(ຂາດທຶນ)ຈາກການດຳເນີນງານກ່ອນອາກອນກຳໄລ		**332.319.659**	**806.936.477**
ອາກອນກຳໄລ	18	(135.620.263)	(192.962.323)
ກຳໄລສຸດທິສຳລັບປີ		**196.699.396**	**613.974.154**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	19	2	7

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 31 ມີນາ 2020

ທ່ານ ວັນສະໜຸ່ມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 31 ມີນາ 2020

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ຖອກແລ້ວ	ສ່ວນເພີ່ມທຶນ	ກຳໄລສະສົມ		ລວມ
			ຄ້າງສະສົມຕາມ ລະບຽບການ	ກຳໄລສະສົມລໍຖ້າ ແບ່ງປັນ	
	ກີບ	ກີບ	ກີບ	ກີບ	ກີບ
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2018	40.000.000.000	-	826.098.998	5.032.179.374	45.858.278.372
ກຳໄລສຳລັບໃນປີ	-	-	-	613.974.154	613.974.154
ອອກຮຸ້ນສາມັນ (ບົດອະທິບາຍຂໍ້ທີ 13)	10.000.000.000	3.269.466.406	-	-	13.269.466.406
ຄ້າງສະສົມຕາມລະບຽບການ(ບົດອະທິບາຍຂໍ້ທີ 14)	-	-	61.397.415	(61.397.415)	-
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2018	**50.000.000.000**	**3.269.466.406**	**887.496.413**	**5.584.756.113**	**59.741.718.932**
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2019	50.000.000.000	3.269.466.406	887.496.413	5.584.756.113	59.741.718.932
ກຳໄລສຳລັບໃນປີ	-	-	-	196.699.396	196.699.396
ຄ້າງສະສົມຕາມລະບຽບການ(ບົດອະທິບາຍຂໍ້ທີ 14)	-	-	19.669.940	(19.669.940)	-
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2019	**50.000.000.000**	**3.269.466.406**	**907.166.353**	**5.761.785.569**	**59.938.418.328**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 31 ມີນາ 2020

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 31 ມີນາ 2020

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019

	ບິດ ອະທິບາຍ	2019 ກີບ	2018 ກີບ
ກຳໄລກ່ອນເສຍອາກອນ		**332.319.659**	**806.936.478**
ລາຍການປັບປຸງ::			
ຄ່າຫຼ້ຍຫ້ຽນ	8	2.335.640.378	1.751.650.811
ຄ່າຕັດຮອນ	9	832.077.389	832.077.389
ການສະສາງຂອງເຄື່ອງໃນສາງ		286.144.944	-
ຂາດທຶນຈາກອັດຕາແລກປ່ຽນ		51.349.982	194.212.523
ລາຍຈ່າຍອັດຕາດອກເບ້ຍ		192.504.846	-
ການປ່ຽນແປງໃນ ທຶນມູນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		4.261.404.678	(2.904.961.606)
ເຄື່ອງໃນສາງ, ສຸດທິ		(2.194.183.033)	(600.580.647)
ວັດສະດຸສະໜອງ, ສຸດທິ		(810.320.129)	(328.990.396)
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		401.919.174	(1.496.814.537)
ຊັບສິນໝຸນວຽນອື່ນໆ		468.366.388	(1.472.628.960)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(6.591.923.752)	(1.690.844.639)
ໜີ້ສິນໝຸນວຽນອື່ນໆ		(127.120.520)	(77.235.125)
ກະແສເງິນສົດຈາກກິດຈະກຳການດຳເນີນງານ. ສຸດທິ		**(561.819.996)**	**(4.987.178.709)**
ອາກອນກຳໄລທີ່ຈ່າຍ		(202.045.740)	(1.537.323.316)
ດອກເບ້ຍທີ່ຈ່າຍ		(192.962.324)	-
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(956.828.060)**	**(6.524.502.025)**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 31 ມີນາ 2020

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 31 ມີນາ 2020

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 – 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019

	ບົດ ອະທິບາຍ	2019 ກີບ	2018 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່		(3.787.500.749)	(4.858.460.764)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ		(1.380.959.051)	(1.093.293.027)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(5.168.459.800)**	**(5.951.753.791)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	12	7.611.560.606	426.674.639
ເງິນສົດຮັບຈາກການອອກຮຸ້ນສາມັນ		-	13.269.466.406
ຈ່າຍເງິນຄືນຈາກການເງິນກູ້ຢືມ		(4.539.969.246)	-
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້	14	(172.625.468)	-
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ		**2.898.965.892**	**13.696.141.045**
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(3.226.321.968)**	**1.219.885.229**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		4.823.430.665	3.571.461.291
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		45.245.413	32.084.145
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ		**1.642.354.110**	**4.823.430.665**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ການໄດ້ມາຂອງຊັບສົມບັດຄົງທີ່ມີຕິວຕົນ ທີ່ຍັງບໍ່ໄດ້ຊຳລະ		2.286.415.180	1.018.171.479

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 31 ມີນາ 2020

ທ່ານ ວັນສະໜຶ່ມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 31 ມີນາ 2020

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ແຜນທີ່ສະຖານທີ່ຈັດກອງປະຊຸມ

ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ຊັ້ນ 8 ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ສປປ ລາວ.

ໂທ : +856-21-454361-4

ແຟັກ : +856-21-454360

